ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 368 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 ມີນາ 2024

# ຂໍ້ຕົກລົງ
# ວ່າດ້ວຍການຍົກເລີກນະໂຍບາຍສິນເຊື່ອ
# ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດ
# ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19)

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງທະນາຄານທຸລະກິດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຂຶ້ນ ເພື່ອຍົກເລີກນະໂຍບາຍສິນເຊື່ອ ຕໍ່ລູກໜີ້ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020.

**ມາດຕາ 2 ການແກ້ໄຂລູກໜີ້ຜູ້ທີ່ຍັງສືບຕໍ່ໄດ້ຮັບຜົນກະທົບ**

ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສາມາດພິຈາລະນາຊ່ວຍເຫຼືອລູກໜີ້ທີ່ຍັງຄ້າງຊຳລະຈາກບ້ວງນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ຕາມການສະເໜີຂອງລູກໜີ້ ດັ່ງນີ້:

1. ປັບປຸງໂຄງສ້າງເງິນກູ້ໃຫ້ລູກໜີ້ ໄດ້ອີກ ໜຶ່ງ ຄັ້ງ ໃນກໍລະນີທີ່ໄດ້ປັບປຸງໂຄງສ້າງເງິນກູ້ໃຫ້ລູກໜີ້ດັ່ງກ່າວມາແລ້ວ ເກີນ ສອງ ຄັ້ງ;
2. ປັບປຸງໂຄງສ້າງເງິນກູ້ໃຫ້ລູກໜີ້ ໄດ້ອີກ ສອງ ຄັ້ງ ໃນກໍລະນີທີ່ໄດ້ປັບປຸງໂຄງສ້າງເງິນກູ້ໃຫ້ລູກໜີ້ດັ່ງກ່າວມາແລ້ວ ບໍ່ເກີນ ສອງ ຄັ້ງ.

ການປັບປຸງໂຄງສ້າງເງິນກູ້ດັ່ງກ່າວ ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕ້ອງຮັບປະກັນວ່າລູກໜີ້ ທີ່ສະເໜີຂໍນະໂຍບາຍນັ້ນ ຍັງສືບຕໍ່ໄດ້ຮັບຜົນກະທົບ ຈາກສະພາບການແຜ່ລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໂດຍມີບົດປະເມີນ ກ່ຽວກັບລູກໜີ້ດັ່ງກ່າວ ແລະ ເອກະສານທີ່ກ່ຽວຂ້ອງ ປະກອບໃສ່ສຳນວນເອກະສານການປັບປຸງໂຄງສ້າງເງິນກູ້.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເປັນເຈົ້າການຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃຫ້ປະຕິບັດ ດັ່ງນີ້:

1. ເອົາໃຈໃສ່ບໍລິຫານສິນເຊື່ອ ທີ່ຕົນໄດ້ສະໜອງ ແລະ ປັບປຸງໂຄງສ້າງເງິນກູ້ໃຫ້ແກ່ລູກໜີ້ທີ່ໄດ້ຮັບຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ດ້ວຍການຕິດຕາມສະພາບການປະກອບອາຊີບ ຫຼື ການເຄື່ອນໄຫວທຸລະກິດ ແລະ ສະພາບການຊຳລະໜີ້ຂອງລູກໜີ້ຢ່າງຮອບຄອບ, ຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ພ້ອມທັງນຳໃຊ້ມາດຕະການເກັບກູ້ໜີ້ ຢ່າງເໝາະສົມ;

2. ລາຍງານການປະຕິບັດນະໂຍບາຍຊ່ວຍເຫຼືອລູກໜີ້ ໃຫ້ທະນາຄານແຫ່ງ ສປປ ລາວ ເປັນໄຕມາດ ຕາມແບບພິມລາຍງານທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

**ບຸນເຫຼືອ ສິນໄຊວໍຣະວົງ**